**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2467 /ຫອຄ.ກຊອ

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2019

# ແຈ້ງການ

**ເຖິງ:** ບັນດາບໍລິສັດນຳເຂົ້າ ແລະ ຈຳໜ່າຍພາຫະນະ.

**ເລື່ອງ:** ກວດກາຄືນເງື່ອນໄຂການເປັນຜູ້ນຳເຂົ້າພາຫະນະເພື່ອມາຈຳໜ່າຍ ຢູ່ ສປປ ລາວ

- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດ ເລກທີ 12/ນຍ, ລົງວັນທີ 23 ສິງຫາ 2018.
- ອີງຕາມຂໍ້ຕົກລົງ ເລກທີ 0075/ອຄ.ກຊອ, ລົງວັນທີ 13 ມັງກອນ 2012 ວ່າດ້ວຍລະບຽບການນຳເຂົ້າ ແລະ ຈຳໜ່າຍລົດ ຢູ່ ສປປ ລາວ.

ເພື່ອເປັນການຜັນຂະຫຍາຍ ມາດຕະການທີ 1 ຂໍ້ ຂ (4) ຂອງ ຄຳສັ່ງເລກທີ 12/ນຍ ທີ່ໄດ້ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ກວດກາ ແລະ ດັດສົມຈຳນວນບໍລິສັດ ແລະ ຮ້ານຈຳໜ່າຍພາຫະນະທີ່ບໍ່ໄດ້ມາດຕະຖານ ເພື່ອຊຸກຍູ້ ແລະ ສົ່ງເສີມການນຳເຂົ້າ ແລະ ການບໍລິການຫຼັງການຂາຍ ທີ່ມີຄຸນນະພາບ, ຮັບປະກັນທາງດ້ານເຕັກນິກ ແລະ ຄຸ້ມຄອງຕາມກົດໝາຍ ແລະ ລະບຽບຢ່າງຮັດກຸມ.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງແຈ້ງມາຍັງ ບັນດາບໍລິສັດນຳເຂົ້າພາຫະນະໃຫ້ເຂົ້າມາພົວພັນລາຍງານຄືນການເຄື່ອນໄຫວກິດຈະການນຳເຂົ້າ ແລະ ຈຳໜ່າຍພາຫະນະ, ດັ່ງມີລາຍລະອຽດລຸ່ມນີ້:

1. ໃຫ້ບໍລິສັດນຳເຂົ້າ ແລະ ຈຳໜ່າຍພາຫະນະ ສະໜອງເອກະສານ ແລະ ຂໍ້ມູນດັ່ງນີ້:
   - ສຳເນົາທະບຽນວິສາຫະກິດ ທີ່ຍັງນຳໃຊ້ໄດ້.
   - ສຳເນົາໃບດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ (ສຳລັບບໍລິສັດທີ່ມີການດັດແກ້ໃບທະບຽນວິສາຫະກິດພາຍຫຼັງວັນທີ 01 ກຸມພາ 2019).
   - ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີ.
   - ເອກະສານແຈ້ງທີ່ຕັ້ງ ຂອງ ບໍລິສັດ, ຫ້ອງວາງຈຳໜ່າຍ ແລະ ສູນບໍລິການຫຼັງການຂາຍ. (ໃນກໍລະນີເຊົ່າສະຖານທີ່ແມ່ນໃຫ້ຄັດຕິດສັນຍາເຊົ່າມາພ້ອມ).
   - ໜັງສືຢັ້ງຢືນການເປັນຕົວແທນຈຳໜ່າຍພ້ອມຂໍ້ມູນຕິດຕໍ່ຜູ້ປະສານງານ ຂອງ ບໍລິສັດແມ່ທີ່ມອບສິດໃຫ້.
   - ສະຫຼຸບຕົວເລກການນຳເຂົ້າພາຫະນະຕົວຈິງ ທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ອະນຸຍາດໃຫ້ ແລະ ຕົວເລກການນຳເຂົ້າຕົວຈິງທີ່ໄດ້ແຈ້ງເສຍພາສີຜ່ານລະບົບ (ASYCUDA) ຈາກ ຂະແໜງການເງິນ ມາພ້ອມ.

2. ບໍລິສັດນໍາເຂົ້າພາຫະນະ ທີ່ຢາກຢຸດຕິການເຄື່ອນໄຫວໃນກິດຈະການໝວດນໍາເຂົ້າຍານພາຫະນະແມ່ນ ໃຫ້ເຮັດໜັງສືແຈ້ງເຈດຈໍານົງເປັນລາຍລັກອັກສອນ ເຖິງ ກົມນໍາເຂົ້າ ແລະ ສົ່ງອອກ.
3. ກໍານົດເວລາເຂົ້າມາພົວພັນນໍາກົມການນໍາເຂົ້າ ແລະ ສົ່ງອອກ ນັບແຕ່ວັນອອກແຈ້ງການ ຈົນຮອດວັນທີ 29 ພະຈິກ 2019. ຫຼັງຈາກຮອດກໍານົດເວລາ, ຖ້າບໍລິສັດໃດຫາກບໍ່ມາພົວພັນ ກົມການນໍາເຂົ້າ ແລະ ສົ່ງອອກ ຈະໄດ້ຢຸດຕິການອອກອະນຸຍາດນໍາເຂົ້າຍານພາຫະນະ ແລະ ຕັດລາຍຊື່ອອກຈາກບັນຊີບໍລິສັດທີ່ມີເງື່ອນໄຂນໍາເຂົ້າຍານພາຫະນະ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ,

ກະຊວງອຸດສາຫະກໍາ ແລະ ການຄ້າ ຫ້ອງການ

ນ.ບານສະຕິ ເທບພະວົງ

**ຕິດຕໍ່ພົວພັນ**
ກົມການນໍາເຂົ້າ ແລະ ສົ່ງອອກ
ເບີໂທ : 021 412008